# ການກູ້ເອົາໜີ້ຄືນຈາກມູນມໍຣະດົກ
# ການຈ່າຍເງິນຄືນໃຫ້ຣັດສຳລັບການບໍຣິການດ້ານການພະຍາບານ
# ແລະ ການດູແລຣະຍະຍາວ ແລະ ການອູ້ມຊູ

**Estate Recovery**

**Repaying the State for Medical and Long Term Services and Supports**

ການກູ້ເອົາໜີ້ຄືນຈາກມູນມໍຣະດົກແມ່ນຫຍັງ?

- ກົດໝາຍຂອງຣັດ (RCW 41.05B ແລະ 43.20B) ບັງໃຫ້ມູນມໍຣະດົກຂອງທ່ານທີ່ຈະຈ່າຍເງິນຄືນໃຫ້ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ (DSHS) ແລະ Health Care Authority (HCA) ສຳລັບຄ່າຂອງການປິ່ນປົວພະຍາບານ ແລະ ການບໍຣິການ ແລະ ການອູ້ມຊູຣະຍະຍາວ (LTSS) ບາງຢ່າງທີ່ທ່ານໄດ້ຮັບ.

ມູນມໍຣະດົກແມ່ນຫຍັງ?

- ທີ່ດິນເຮືອນຊານ ແລະ ຊັບສິນແນວອື່ນທຸກໆຢ່າງທີ່ທ່ານເປັນເຈົ້າຂອງ ຫລື ມີຜົນປະໂຍດຕາມກົດໝາຍໃນເວລາຂອງການເສັຽຊີວິດຂອງທ່ານທີ່ຖືກໂອນຕໍ່ດ້ວຍ ຫລື ບໍ່ມີພິນັຍກັມ. ອັນນີ້ລວມເອົາທີ່ດິນເຮືອນຊານ ແລະ ຊັບສິນເຊັ່ນວ່າ:
    - o ເຮືອນຊານ , ທີ່ດິນ;
    - o ບັນຊີທະນາຄານ;
    - o ສະຕອກ໌,ບອນດ໌;
    - o ຊັບສິນບັດສ່ວນຕົວ; ແລະ
    - o ຊັບສິນທີ່ບໍ່ຖືກແຈກຢາຍ, ມູນມໍຣະດົກຊີວິດ.

ແມ່ນຫຍັງແດ່ທີ່ບໍ່ແມ່ນສ່ວນຂອງມູນມໍຣະດົກຂອງທ່ານ?

- ທີ່ດິນເຮືອນຊານ ແລະ ຊັບສິນແນວອື່ນໆທີ່ທ່ານບໍ່ເປັນເຈົ້າຂອງ ຫລື ມີຜົນປະໂຍດຕາມກົດໝາຍໃນເວລາຂອງການເສັຽຊີວິດຂອງທ່ານ. ຕົວຢ່າງວ່າ, ທີ່ດິນເຮືອນຊານຫລືຊັບສິນອື່ນໆທີ່ເປັນເຈົ້າຂອງຄົນດຽວໂດຍພໍ່ແມ່ຂອງທ່ານ, ຄູ່ຜົວເມັຽ, ຂາຄູ່ຢູ່ນຳກັນທີ່ຖືກຈົດຊື່ນຳຣັດ, ຫລື ລູກຂອງທ່ານ.

ຊັບສິນແນວໃດແດ່ທີ່ຖືກຍົກເວັ້ນໄດ້ຈາກການກູ້ເອົາໜີ້ຄືນຈາກມູນມໍຣະດົກ?

- ຊັບສິນຂອງຊົນເຜົ່າບາງຢ່າງ;
- ການຈ່າຍເງິນປົວແປງຂອງຣັດຖະບານບາງຢ່າງ;ແລະ
- ຊັບສິນທີ່ຖືກປົກປ້ອງໂດຍນະໂຍບາຍການປະສານງານຮ່ວມມືໃນການປິ່ນປົວຣະຍະຍາວທີ່ມີສິດໄດ້ຮັບ.

ຖ້າຫາກວ່າທ່ານບໍ່ມີຊັບສິນແນວໃດໃນເວລາຂອງການເສັຽຊີວິດຂອງທ່ານເດ?

- ມັນຈະບໍ່ມີການກູ້ເອົາໜີ້ຄືນຈາກມູນມໍຣະດົກ.

ມີຣາຍຈ່າຍພະຍາບານ ແລະ LTSS ແນວໃດແດ່ທີ່ໄດ້ຖືກລວມເຂົ້າໃສ່ໃນການກູ້ເອົາໜີ້ຄືນຈາກມູນມໍຣະດົກ?

- ຣາຍຈ່າຍຄ່າ LTSS ທີ່ຖືກອອກເງິນທຶນຈາກຣັດຖະບານກາງທີ່ກົມ DSHS ຫລື HCA ຈ່າຍຫລັງຈາກທີ່ທ່ານມີອາຍຸ 55;
- ຣາຍຈ່າຍຄ່າ LTSS ທີ່ຖືກອອກເງິນທຶນຈາກຣັດທີ່ກົມ DSHS ຫລື HCA ຈ່າຍໃນທຸກໆອາຍຸ, ຍົກເວັ້ນແຕ່:
    - o ການບໍຣິການປ້ອງກັນຜູ້ໃຫຍ່;
    - o ເງິນຈ່າຍສຳລັບຄວາມປອດພັຍເພີ້ມເຕີມທີ່ຖືກອະນຸຍາດໃຫ້ໂດຍພະແນກ Developmental Disability Administration;
    - o ການບໍຣິການຂອງໂຄງການຄວາມປອດພັຍຂອງຊຸມນຸມຊົນຂອງການເຂົ້າມາຄືນຂອງຜູ້ກະທຳຜິດ; ແລະ
    - o ການບໍຣິການເຮັດວຽກບ້ານຕາມສະມັກໃຈ.

ມີຣາຍຈ່າຍພະຍາບານ ແລະ LTSS ແນວໃດແດ່ທີ່ບໍ່ໄດ້ຖືກລວມເຂົ້າໃສ່ໃນການກູ້ເອົາໜີ້ຄືນຈາກມູນມໍຣະດົກ?

- ຣາຍຈ່າຍທີ່ HCA ຈ່າຍພາຍໃຕ້ໂຄງການເມດິແຄຣ໌ເຊວວິງຂອງຣັດຖະບານກາງ.
- ຄ່າປິ່ນປົວພະຍາບານທີ່ HCA ຈ່າຍຖ້າຫາກວ່າທ່ານບໍ່ໄດ້ຮັບການບໍຣິການ LTC ອີກຄືກັນ.

ເມື່ອໃດການກູ້ເອົາໜີ້ຄືນຈາກມູນມໍຣະດົກຈະຊັກຊ້າ?

- ຖ້າຫາກວ່າຜົວເມັຽຂອງທ່ານຍັງມີຊີວິດຢູ່;
- ຖ້າຫາກວ່າທ່ານມີລູກຍັງມີຊີວິດຢູ່ອາຍຸຕ່ຳກວ່າ 21 ປີ;
- ຖ້າຫາກວ່າທ່ານມີລູກຍັງມີຊີວິດຢູ່ຜູ້ທີ່ຕາບອດ ຫລື ເສັຽອົງຄະໃນເວລາຂອງການເສັຽຊີວິດຂອງທ່ານ; ຫລື
- ໃນຣະຫວ່າງຣະຍະເວລາຂອງຄວາມລຳບາກທີ່ເຫນືອວິສັຍ, ຖ້າຫາກວ່າຜູ້ສືບທອດມໍຣະດົກຂອງທ່ານຮ້ອງຂໍເອົາຄວາມລຳບາກທີ່ເຫນືອວິສັຍ ແລະ ກົມ DSHS ອະນຸມັດຄຳຮ້ອງຂໍ.

ເມື່ອໃດກົມ DSHS ຈະອະນຸມັດຄວາມລຳບາກທີ່ເຫນືອວິສັຍ?

- ການກູ້ເອົາໜີ້ຄືນເຮັດໃຫ້ຜູ້ສືບທອດມໍຣະດົກຂາດເຂີນບ່ອນທີ່ຈະອາສັຍຢູ່ ແລະ ເຂົາເຈົ້າຂາດເຂີນການເງິນທີ່ຈະອາສັຍຢູ່ບ່ອນອື່ນ;
- ມູນມໍຣະດົກເປັນຊັບສິນບັດທີ່ຜະລິດຣາຍໄດ້ຢ່າງດຽວສຳລັບຜູ້ສືບທອດມໍຣະດົກຂອງເຂົາເຈົ້າ; ຫລື
- ຂາຄູ່ຢູ່ນຳກັນທີ່ຖືກລົງທະບຽນນຳຣັດຂອງທ່ານຍັງມີຊີວິດຢູ່.

ຖ້າຫາກວ່າທ່ານອາສັຍຢູ່ໃນສະຖານພະຍາບານ ແລະ ທ່ານບໍ່ສາມາດຄາດຫມາຍຢ່າງມີເຫດຜົນວ່າ ທ່ານຈະກັບຄືນມາເຮືອນເດ?

- ເຖິງແມ່ນວ່າມັນຈະບໍ່ແມ່ນ "ການກູ້ເອົາໜີ້ຄືນຈາກມູນມໍຣະດົກ," DSHS ສາມາດວາງການຜູກມັດໃສ່ກ່ອນເສັຽຊີວິດຍ້ອນກົດຫມາຍ Tax Equity and Fiscal Responsibility Act (TEFRA) of 2005.
- ກົດຫມາຍຈະອະນຸຍາດໃຫ້ກົມ DSHS ທີ່ຈະຍື່ນການຜູກມັດໃສ່ເຮືອນຂອງທ່ານກ່ອນການເສັຽຊີວິດ.
- ມີແຕ່ບຸກຄົນຜູ້ທີ່ຕ້ອງໄດ້ຈ່າຍໄປໃສ່ຄ່າຂອງການປິ່ນປົວຂອງເຂົາເຈົ້າເທົ່ານັ້ນສາມາດມີການຜູກມັດໃສ່ກ່ອນການເສັຽຊີວິດຂອງເຂົາເຈົ້າ. ຖ້າຫາກວ່າ DSHS ມີການຜູກມັດໃສ່ເຮືອນຂອງທ່ານ ແລະ ທ່ານຂາຍເຮືອນ, DSHS ຈະກູ້ເອົາໜີ້ຄືນສຳລັບຄ່າຂອງການບໍຣິການພະຍາບານ ແລະ LTSS ຈາກເງິນທີ່ໄດ້ມາ.
- DSHS ຈະບໍ່ຍື່ນການຜູກມັດໃສ່ເຮືອນຂອງທ່ານຖ້າຫາກວ່າຜົວເມັຽຂອງທ່ານ, ຂາຄູ່ຢູ່ນຳກັນທີ່ຖືກລົງທະບຽນນຳຣັດ, ລູກອາຍຸຕ່ຳກວ່າ 21 ປີ, ຫລື ຄົນຫວັງເພິ່ງຄົນອື່ນອ້າຍນ້ອງຄືງໆທີ່ອາສັຍຢູ່ທີ່ນັ້ນ.
- DSHS ຈະປ່ອຍການຜູກມັດຖ້າຫາກວ່າທ່ານກັບຄືນມາເຮືອນ.

ຖ້າຫາກວ່າທ່ານຕ້ອງການຣາຍຣະອຽດເພີ້ມເຕີມເດ?

- ໂທຫາ Coordinated Legal Education, Advice and Referral Line (CLEAR) ເລກໂທຟຣີໄດ້ທີ່ 1-888-201-1014.
- ປຶກສານຳທະນາຍຄວາມຜູ້ທີ່ເຂົ້າໃຈໃນກົດຣະບຽບກ່ຽວກັບການວາງແຜນເຣື່ອງມູນມໍຣະດົກ ແລະ ການຊ່ວຍເຫລືອພະຍາບານ.
- ຈົ່ງອ່ານ "Estate Recovery for Medical Services Paid for by the State" ຢູ່ທີ່ www.washingtonlawhelp.org.
- ສຳລັບການຍົກເວັ້ນການກູ້ເອົາໜີ້ຄືນຈາກມູນມໍຣະດົກສຳລັບຄົນອາລາສການາແຕ່ກຳເນີດຫລືຄົນອະເມຣິກັນອິນດຽນ,ຈົ່ງເບິ່ງ "Native American and Alaska Native Property Owners: Exemptions from Estate Recovery" at www.washingtonlawhelp.org.
- ອ່ານກົດຫມາຍມາດຕາ RCW 41.05A ແລະ 43.20B ແລະ ມາດຕຣາ 182-527 WAC.